# ອາສາສະໝັກທຸກຄົນລ້ວນແຕ່ເປັນທູດເສີມສ້າງມິດຕະພາບ ລະຫວ່າງສອງຊາດລາວ ແລະ ຈີນ

ຫວ່າງມໍ່ໆມານີ້, ຢູ່ພະແນກປັກເຂັມໂຮງໝໍ 109 ສປປ ລາວ, ທ່ານ ເສີງຣຸ້ຍສື (Shen Ruishi) ອາຍຸ 26 ປີ ອາສາສະໝັກຊາວໜຸ່ມຈີນ ກຳລັງຫຍຸ້ງວຽກການປິ່ນປົວພະຍາດໃຫ້ແກ່ຄົນເຈັບ. ທ່ານ ໄດ້ປິ່ນປົວພະຍາດດ້ວຍແພດແຜນຈີນ ຢ່າງຊຳນານ ພາຍໃຕ້ການຊ່ວຍເຫຼືອຂອງນາຍພາສາແປ.

ທ່ານ ເສີງຣຸ້ຍສື ມາຈາກໂຮງໝໍຊູກວາງ (SHUGUANG HOSPITAL) ທີ່ຂຶ້ນກັບມະຫາວິທະຍາໄລແພດແຜນ ແລະ ຢາພື້ນເມືອງຈີນ ຊຽງໄຮ້, ເປັນອາສາສະໝັກ ໃນໂຄງການອາສາສະໝັກຊາວໜຸ່ມຈີນ (ຊຽງໄຮ້) ຊ່ວຍເຫຼືອປະເທດລາວ ຊຸດທີ 12. ວັນທີ 26 ພະຈິກ 2023, ອາສາສະໝັກ 5 ຄົນ ເຊິ່ງລວມທັງ ທ່ານ ເສີງຣຸ້ຍສື ໄດ້ເດີນທາງມາຮອດປະເທດລາວ ແລະ ເລີ່ມການບໍລິການອາສາສະໝັກເປັນເວລາ 1 ປີ ໃນຂົງເຂດຕ່າງໆ ເຊັ່ນ: ການສອນພາສາຈີນ, ວິຊາປັກເຂັມຕາມແພດແຜນຈີນ, ເຕັກນິກຂໍ້ມູນຂ່າວສານເປັນຕົ້ນ.

ທ່ານ ເສີງຣຸ້ຍສື ກ່າວວ່າ, "ທາງນະຄອນຫຼວງວຽງຈັນ ໄດ້ຮັບປະກັນທຸກດ້ານຂອງພວກເຮົາເປັນຢ່າງດີ, ບໍ່ຕ້ອງເປັນຫ່ວງນຳເງື່ອນໄຂ ດ້ານຊີວິດການເປັນຢູ່, ແຕ່ວ່າ ພວກເຮົາກໍໄດ້ພົບຄວາມຫຍຸ້ງຍາກຫຼາຍຢ່າງໃນວຽກງານ". ທ່ານ ເສີງຣຸ້ຍສື ບອກໃຫ້ຮູ້ວ່າ, ເຖິງແມ່ນວ່າໂຮງໝໍ 109 ເປັນໂຮງໝໍລັດ, ແຕ່ກໍຍັງຂາດເຂີນອຸປະກອນການແພດພື້ນຖານຫຼາຍຢ່າງ.

ທ່ານ ເສີງຣຸ້ຍສື ກ່າວວ່າ, "ຄົນເຈັບມາປົວພະຍາດ, ທຳມະດາແລ້ວ ຈະບອກເຮົາວ່າ, ຕົນເອງເຈັບຄໍ, ເຈັບແອວ ຢ່າງງ່າຍດາຍ, ຍ້ອນບັນຫາເລື່ອງພາສາ, ຈຶ່ງບໍ່ສາມາດປິ່ນປົວພະຍາດໃຫ້ຖືກຕ້ອງແມ່ນຢຳຄືກັນກັບຢູ່ປະເທດຈີນ ແລະ ບໍ່ສາມາດຮັບຮູ້ປະຫວັດຕິດພະຍາດຂອງຄົນເຈັບ ພາຍໃນເວລາສັ້ນ". ສະນັ້ນ, ໃນເວລາປິ່ນປົວໃຫ້ຄົນເຈັບ, ຂ້າພະເຈົ້າ ຈະປະສານສົມທົບກັບຂັ້ນຕອນການປິ່ນປົວພື້ນຖານຂອງທ້ອງຖິ່ນ, ພ້ອມທັງອີງໃສ່ຄວາມຮູ້ດ້ານການປິ່ນປົວພະຍາດຕາມແພດແຜນຈີນ ເພື່ອວາງແຜນການປິ່ນປົວໃຫ້ຄົນເຈັບຕາມສະພາບຕົວຈິງ ຂອງແຕ່ລະຄົນ.

ຈັນຍາບັນດ້ານການແພດຂອງ ທ່ານ ເສີງຣຸ້ຍສື ໄດ້ຮັບຄວາມຍິນດີຈາກປະຊາຊົນທ້ອງຖິ່ນຫຼາຍ, ໃນເວລາພຽງໜຶ່ງເດືອນປາຍເທົ່ານັ້ນ, ກໍມີຄົນເຈັບຫຼາຍກວ່າ 70% ກັບມາປົວພະຍາດນຳເພີ່ມອີກ. ເຊັ່ນດຽວກັນ ກັບ ທ່ານ ເສີງຣຸ້ຍສື ຫຼັງຈາກເດີນທາງມາເຖິງປະເທດລາວແລ້ວ, ອາສາສະໝັກອີກ 4 ຄົນ ກໍໄດ້ຕັ້ງໜ້າ ປັບຕົວໃຫ້ຊິນເຄີຍ ກັບ ຊີວິດການເປັນຢູ່ຂອງປະເທດລາວ ດ້ວຍການບໍລິການປະຊາຊົນທ້ອງຖິ່ນ ເປັນຢ່າງດີ ດ້ວຍຄວາມສາມາດຂອງຕົນ.

ທ່ານ ຢາວຊຸ້ນ (Yao Shun) ເປັນຫົວໜ້າທີມງານອາສາສະໝັກຊາວໜຸ່ມຊຸດນີ້, ລາວມາຈາກ ໂຄງການແຫ່ງຄວາມຫວັງ ແລະ ສູນຊີ້ນຳວຽກງານອາສາສະໝັກຊາວໜຸ່ມນະຄອນຊຽງໄຮ້, ປັດຈຸບັນນີ້ ເປັນອາສາສະໝັກຢູ່ພະແນກການພັດທະນາເຕັກນິກວິຊາຊີບສູນກາງຊາວໜຸ່ມລາວ.

ທ່ານ ຢາວຊຸ້ນ ໄດ້ຮັບຜິດຊອບການບໍລິການດ້ານການສອນພາສາຈີນ, ທ່ານ ກ່າວວ່າ "ຫຼັກສູດຂອງພວກເຮົາ ໄດ້ແບ່ງເປັນ 2 ຫ້ອງ ຄື: ຫ້ອງຜູ້ບໍ່ເຄີຍຮຽນພາສາຈີນ ແລະ ຫ້ອງຜູ້ທີ່ສາມາດເວົ້າ ແລະ ຟັງພາສາຈີນໄດ້ໜ້ອຍໜຶ່ງ, ພ້ອມທັງໄດ້ອາໄສສື່ໃໝ່ຕ່າງໆ ເພື່ອໃຫ້ນັກຮຽນສາມາດກຳໄດ້ທັກສະການຟັງ, ການເວົ້າ, ການອ່ານ ແລະ ການຂຽນພາສາຈີນ".

ທ່ານ ຢາວຊຸ້ນ ກ່າວຕື່ມວ່າ, "ອາສາສະໝັກທຸກຄົນລ້ວນແຕ່ເປັນທູດເສີມສ້າງມິດຕະພາບ ລະຫວ່າງ ສອງຊາດຈີນ ແລະ ລາວ. ພວກເຮົາຈະປະຕິບັດຕາມລະບຽບການບໍລິການຂອງອາສາສະໝັກຢ່າງເຂັ້ມງວດ, ຈະດຳເນີນວຽກງານອາສາສະໝັກແບບອ້າຍນ້ອງກັນ, ຮ່ວມກັນໃຫ້ການບໍລິການທີ່ມີຄວາມອົບອຸ່ນຂອງຈີນແກ່ປະຊາຊົນລາວ".

ແຫຼ່ງຂ່າວ: ບັນຊີວີແຊັດທາງການ "ອາສາສະໝັກຊາວໜຸ່ມຈີນ", ເວັບໄຊ Xinmin

**ເນື້ອໃນເພີ່ມເຕີມ:**

ນັບຕັ້ງແຕ່ປີ 2002 ເປັນຕົ້ນມາ, ໂດຍໄດ້ຮັບການມອບໝາຍຈາກຄະນະກຳມະການສູນກາງຄະນະຊາວໜຸ່ມພັກກອມມູນິດຈີນ ແລະ ສະມາຄົມອາສາສະໝັກຊາວໜຸ່ມຈີນ, ນະຄອນຊຽງໄຮ້ ໄດ້ສົ່ງອາສາສະໝັກຊາວໜຸ່ມດີເດັ່ນ ທັງໝົດ 11 ຊຸດ ຈຳນວນ 118 ຄົນ, ມາດຳເນີນວຽກງານອາສາສະໝັກໃນດ້ານການສອນພາສາຈີນ-ອັງກິດ, ການຝຶກຊ້ອມກິລາ, ການຝຶກອົບຮົມດ້ານຄອມພິວເຕີ, ການແພດ ແລະ ສາທາລະນະສຸກ, ເຕັກນິກການກະເສດ, ວຽກງານຖະແຫຼງຂ່າວ ແລະ ອື່ນໆ ຢູ່ປະເທດລາວ.

ແຫຼ່ງຂ່າວ: ເວັບໄຊ Xinmin

# ທາງລົດໄຟລາວ-ຈີນ ໄດ້ຂົນສົ່ງສິນຄ້າຫຼາຍກວ່າ 2.900 ຊະນິດ

ແຫຼ່ງຂ່າວຈາກກຸ່ມບໍລິສັດທາງລົດໄຟຈີນ ຈຳກັດ ໃຫ້ຮູ້ວ່າ, ນັບຕັ້ງແຕ່ການເປີດນຳໃຊ້ທາງລົດໄຟລາວ-ຈີນ ມາຮອດວັນທີ 19 ກຸມພາ 2024, ທາງລົດໄຟ ລາວ-ຈີນ ໄດ້ຂົນສົ່ງຜູ້ໂດຍສານ ທັງໝົດ 28,897 ລ້ານເທື່ອຄົນ; ໄດ້ຂົນສົ່ງສິນຄ້າ 33,059 ລ້ານໂຕນ, ໃນນັ້ນ ສິນຄ້າຂ້າມຊາດ ມີເຖິງ 7,509 ລ້ານໂຕນ; ສິນຄ້າທີ່ຂົນສົ່ງໃນໄລຍະຕົ້ນມີແຕ່ປຸ໋ຍເຄມີ, ເຄື່ອງໃຊ້ປະຈຳວັນ ທັງໝົດ 10 ກວ່າຊະນິດ ເທົ່ານັ້ນ. ປັດຈຸບັນ, ໄດ້ເພີ່ມຂຶ້ນເປັນ 2.900 ກວ່າຊະນິດ. ໃນນັ້ນ ມີເຄື່ອງເອເລັກໂຕຣນິກ, ອຸປະກອນຜະລິດໄຟຟ້າດ້ວຍແສງຕາເວັນ, ໝາກໄມ້ແຊ່ເຢັນເປັນຕົ້ນ.


ທີ່ດ່ານບໍ່ຫານຕາມທາງລົດໄຟລາວ-ຈີນ ມີຜູ້ໂດຍສານບໍ່ຂາດສາຍ.
ພາບໂດຍ: Zhang Weiming, Yin Xuehe

ແຫຼ່ງຂ່າວ: ເວັບໄຊປະຊາຊົນຈີນ



# ແຂວງຢຸນນານ ມີຫ້ອງອາຫານສຳລັບນົກຂຽນຄໍດຳ

ຢູ່ສະຖານີປົກປ້ອງເຫີງເຫີ (Henghe) ຂອງເຂດສະຫງວນທຳມະຊາດ ລະດັບແຂວງ ທີ່ປົກປ້ອງນົກຂຽນຄໍດຳ ຊຸນຕ້ຽນ (Xundian) ແຂວງຢຸນນານ, ທ່ານ ສືຊາວກົວ (Shi Shao guo) ຫົວໜ້າໜ່ວຍລາດຕະເວນກຳລັງກວດເບິ່ງກ້ອງວົງຈອນປິດ ທີ່ຕິດຕາມຮ່ອງຮອຍຂອງນົກຂຽນຄໍດຳ ຢູ່ໃນຄອມພິວເຕີ, ທ່ານໄດ້ຕັ້ງໃຈຕິດຕາມຮອຍຕີນຂອງນົກຂຽນຄໍດຳຢ່າງລະອຽດ. "1,2,3... ມີນົກຂຽນຄໍດຳ 46 ໂຕກຳລັງພັກຜ່ອນ ແລະ ຊອກຫາອາຫານ ຢູ່ຕາມທົ່ງນາ".

"ໃນຊຸມປີ 1990, ເມືອງຊຸນຕ້ຽນ ກໍໄດ້ມີ ນົກຂຽນຄໍດຳຫຼາຍຮ້ອຍໂຕ. ໃນຕອນນັ້ນ, ພໍ່ຂ້ອຍ ຍັງເປັນພະນັກງານເຝົ້າຮັກສາປ່າໄມ້, ໃນທົ່ວເມືອງຊຸນຕ້ຽນ ກໍມີພຽງແຕ່ລາວຄົນດຽວທີ່ ຮັບຜິດຊອບວຽກງານປົກປ້ອງນົກຂຽນຄໍດຳ." ຕໍ່ມາ ປີ 2017, ທ່ານ ສືຊາວກົວ ໄດ້ສືບທອດພາລະໜ້າທີ່ຂອງພໍ່, ມາເຮັດວຽກຢູ່ສະຖານີປົກປ້ອງ. ປັດຈຸບັນນີ້ ມີພະນັກງານລາດຕະເວນ ທັງໝົດ 10 ທ່ານ ໄດ້ເຂົ້າຮ່ວມຖັນແຖວປົກປ້ອງນົກຂຽນຄໍດຳ.

"ໄປ! ໄປລາດຕະເວນ!" ຕັ້ງແຕ່ເຊົ້າ, ທ່ານ ສືຊາວກົວ ກໍໄດ້ຈັບອຸປະກອນອອກໄປລາດຕະເວນຢູ່ໃນປ່າແລ້ວ. ເສັ້ນທາງທີ່ໄປລາດຕະເວນໃນເດືອນກຸມພາ ແມ່ນມີລົມທັງແຮງທັງໜາວ. ທຸກມື້ພະນັກງານລາດຕະເວນຕ້ອງໄດ້ໄປລາດຕະເວນ 2-3 ເທື່ອ, ປະຈຳການຕະຫຼອດ 24 ຊົ່ວໂມງ, ວັນທ້າຍສັບປະດາ ແລະ ມື້ບຸນຕ່າງໆກໍຄືກັນ. ນອກຈາກການລາດຕະເວນແລ້ວ, ພະນັກງານຍັງຕ້ອງກຽມໝາກສາລີໄວ້ໃຫ້ນົກຂຽນຄໍດຳ.

ທ່ານ ຫວັງໂຍເຕີ (Wang Youde) ພະນັກງານລາດຕະເວນ ກ່າວວ່າ, "ໝາກສາລີແມ່ນພວກເຮົາປູກເອງ, ນອກນັ້ນຍັງມີ 'ຫ້ອງອາຫານສຳລັບນົກຂຽນຄໍາດໍາ' ແຫ່ງໜຶ່ງ!" "ຫ້ອງອາຫານນົກຂຽນຄໍາດໍາ" ທີ່ພວກເຂົາເວົ້ານັ້ນ ກໍແມ່ນສູນທົດລອງທີ່ສ້າງຕັ້ງຂຶ້ນໃນປີ 2017, ສູນທົດລອງດັ່ງກ່າວ ມີເນື້ອທີ່ປະມານ 3 ເຮັກຕາ, ເຊິ່ງໄດ້ປູກມັນຝະລັ່ງ, ເຂົ້າຊາຮາແຊງ ແລະ ຜັກກາດຫົວ.

ທ່ານ ມ່າຊິງປິງ (Ma Qingbing) ຮອງຫົວໜ້າຫ້ອງການປົກປ້ອງນົກຂຽນຄໍດຳເມືອງຊຸນຕ້ຽນ ກ່າວວ່າ, "'ຫ້ອງອາຫານສຳລັບນົກຂຽນຄໍດຳ' ດ້ານໜຶ່ງຈະສາມາດຫຼີກລ່ຽງ ບໍ່ໃຫ້ນົກຂຽນຄໍດຳ ມາທຳລາຍພືດພັນທັນຍະຫານຂອງປະຊາຊົນ, ອີກດ້ານໜຶ່ງກໍສາມາດຮັບປະກັນໃຫ້ນົກຂຽນຄໍດຳມີອາຫານຫຼາຍຢ່າງ, ພ້ອມທັງຫຼີກລ່ຽງບໍ່ໃຫ້ນົກຂຽນຄໍດຳຂາດອາຫານການກິນໃນລະດູໜາວ."

ຕາມຂ່າວໃຫ້ຮູ້ວ່າ, ດິນທາມພູພຽງແຂວງຢຸນນານເປັນທີ່ຢູ່ພັກເຊົາໃນລະດູໜາວທີ່ສຳຄັນສຳລັບນົກຂຽນຄໍດຳ. ຕາມການຕິດຕາມສຳຫຼວດໃຫ້ຮູ້ວ່າ, ໃນຊຸມປີຜ່ານມາ,ຈຳນວນນົກຂຽນຄໍດຳ ທີ່ມາພັກເຊົາຢູ່ແຂວງຢຸນນານໃນລະດູໜາວ ໄດ້ເພີ່ມຂຶ້ນທຸກປີ, ປັດຈຸບັນນີ້ ໄດ້ມີຫຼາຍກວ່າ 3.000 ໂຕແລ້ວ.

ແຫຼ່ງຂ່າວ: ໜັງສືພິມລາຍວັນ Guangming

(ສະໜອງຂໍ້ມູນໂດຍ: ສູນການສື່ສານສາກົນພາກພື້ນອາຊີໃຕ້–ອາຊີຕາເວັນອອກສຽງໃຕ້ ແຂວງຢຸນນານ)





ynzhanba@163.com
laos.yunnangateway.com